**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ

1919----

ເລກທີ /ຜກ

ນະຄອນຫຼວງວຽງຈັນ, ວັນທີ 20 ມິຖຸນາ 2023

# ບົດບັນທຶກ

## ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024

ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ສ້າງແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024 ໄດ້ຈັດຂຶ້ນໃນວັນທີ 14-15 ມິຖຸນາ 2023 ທີ່ຣີສອດນາປ່າກວາງ (ທ່າລາດ), ເມືອງແກ້ວອຸດົມ, ແຂວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ປອ ບຸນປັນ ໄຊມຸນຕີ ຫົວໜ້າກົມແຜນການ, ກະຊວງສຶກສາທິການ ແລະ ກິລາ, ໂດຍມີບັນດາທ່ານຫົວໜ້າກົມ, ຮອງອະທິການບໍດີ, ມະຫາວິທະຍາໄລ , ຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຕາງໜ້າຈາກກົມວິຊາການ ຂອງກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຍຸຕິທຳ, ກະຊວງການເງິນ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ສະຖາບັນທະນາຄານ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ແລະ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ພະແນກສຶກສາທິການ ແລະ ກິລາ ແຂວງວຽງຈັນ, ພະນັກງານວິຊາການ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ ລວມທັງໝົດ 36 ທ່ານ (ຍິງ 5 ທ່ານ).

ກອງປະຊຸມ ໄດ້ມີການລາຍງານ, ສົນທະນາ ປຶກສາຫາລື ແລະ ມີຄຳເຫັນກ່ຽວກັບເນື້ອໃນດັ່ງນີ້: (1) ການລາຍງານແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ແລະ ແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024, (2) ຮ່າງຂໍ້ຕົກລົງແຜນແບ່ງປັນສັບຊ້ອນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຖະກອນເຂົ້າຮຽນພາຍໃນປະເທດ, (3) ການສະຫຼຸບລາຍງານການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ແລະ ແຜນລະອຽດຂອງບັນດາກົມວິຊາການກ່ຽວຂ້ອງຂອງກະຊວງສຶກສາທິການ ແລະ ກິລາ ແລະ ບັນດາກະຊວງຕ່າງໆທີ່ມີສະຖາບັນການສຶກສາຂຶ້ນກັບ,

(4) ຮ່າງແຈ້ງການວ່າດ້ວຍການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024.

ຜ່ານການຮັບຟັງ, ປຶກສາຫາລື, ຄົ້ນຄວ້າປະກອບຄຳຄິດເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນຂອງ ຜູ້ແທນເຂົ້າຮ່ວມ ກອງປະຊຸມໄດ້ມີຄວາມເປັນເອກະພາບກັນໂດຍພື້ນຖານຮັບຮອງເອົາ ບົດບັນທຶກນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດສົກຮຽນ 2023-2024 ດັ່ງນີ້:

1. **ດ້ານເນື້ອໃນ**

- ➢ ກອງປະຊຸມເຫັນດີເປັນເອກະພາບຕໍ່ບົດສະຫຼຸບລາຍງານແຜນການຈັດຕັ້ງປະຕິບັດແບ່ງປັນສົບຊ້ອນນັກຮຽນ-ພະນັກງານ ເຂົ້າຮຽນພາຍໃນປະເທດ ສົກຮຽນ 2022-2023 ທາງດ້ານສະພາບລວມ, ຂໍ້ສະດວກ, ບັນຫາ ແລະ ສິ່ງທ້າທາຍ, ບົດຮຽນທີ່ຖອດຖອນໄດ້, ຂໍ້ສະເໜີ ແລະ ວິທີແກ້ໄຂໃນຕໍ່ໜ້າ ໂດຍພື້ນຖານ;
- ➢ ກອງປະຊຸມເປັນເອກະພາບກັນໃນການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ພະນັກງານເຂົ້າຮຽນພາຍໃນປະເທດ ສົກຮຽນ 2023-2024 ດັ່ງລຸ່ມນີ້ :

  - ຮັກສາຕົວເລກແບ່ງປັນໃນແຜນຂອງ**ສະຖາບັນການສຶກສາຊັ້ນສູງ ແລະ ສະຖາບັນການສຶກສາສ້າງຄູ** ທີ່ເປັນເບ້ຍລ້ຽງຂອງລັດຖະບານໃນ 20% ຂອງແຜນຮັບທັງໝົດ. ໃນນີ້ 10% ມະຫາວິທະຍາໄລ ແລະ ວິທະຍາໄລຄູ ເປັນຜູ້ຄັດເລືອກແບ່ງປັນ ແລະ ອີກ 10% ມອບໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ເປັນຜູ້ຄັດເລືອກແບ່ງປັນນັກຮຽນຜູ້ທີ່ຮຽນຈົບສາຍສາມັນສຶກສາ ແລະ ສ່ວນ 80% ແມ່ນຈ່າຍຄ່າຮຽນ;
  - ສະຖາບັນອາຊີວະສຶກສາແມ່ນ 40% ຂອງແຜນຮັບທັງໝົດ ເປັນຕົວເລກໄດ້ຮັບເບ້ຍລ້ຽງຂອງລັດຖະບານ (ໃນແຜນ); ສ່ວນທີ່ເຫຼືອ 60% ແມ່ນຕົວເລກສອບເສັງ ແລະ ຈ່າຍຄ່າຮຽນ;
  - ນັກຮຽນທີ່ຮຽນຈົບສາຍສາມັນສຶກສາ(ມ7)ໄດ້ຮັບນະໂຍບາຍ ແລະ ບຸລິມະສິດພິເສດສາມາດເລືອກຮຽນໄດ້ທຸກຄະນະວິຊາ,ທຸກສາຂາວິຊາ ຢູ່ມະຫາວິທະຍາໄລ 04 ແຫ່ງທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ແມ່ນ ນັກຮຽນເກັ່ງລະດັບຊາດ(ທີ1 ຫາ ທີ3), ນັກຮຽນໄດ້ປະກາສະນີຍະບັດແດງ ແລະ ນັກຮຽນເກັ່ງ ທີ 1 ຂອງແຂວງ/ນະຄອນຫຼວງ;
  - ສຳລັບນັກຮຽນທີ່ຮຽນຈົບສາຍສາມັນສຶກສາ(ມ7) ຈະໄປຮຽນແພດສາດ ຢູ່ມະຫາວິທະຍາໄລວິທະຍາສາດສຸຂະພາບ, ກະຊວງສາທາລະນະສຸກ ຕ້ອງແມ່ນນັກຮຽນໄດ້ຮັບປະກາສະນີຍະບັດແດງ ຫຼື ນັກຮຽນເກັ່ງຮອບດ້ານ(ຄະແນນ 9 ຂຶ້ນໄປທຸກວິຊາ) ແລະ ຄົບມາດຖານ, ເງື່ອນໄຂຕ່າງໆຂອງມະຫາວິທະຍາໄລດັ່ງກ່າວກຳນົດໄວ້;
  - ການຄັດເລືອກນັກຮຽນ-ພະນັກງານ ໃຫ້ປະຕິບັດຕາມມາດຖານ ແລະ ເງື່ອນໄຂທີ່ກຳນົດໄວ້ໃນແຈ້ງການຈັດຕັ້ງປະຕິບັດແຜນແບ່ງປັນສົບຊ້ອນນັກຮຽນ-ພະນັກງານເຂົ້າຮຽນ ສົກຮຽນ 2023-2024 ຢ່າງເຄັ່ງຄັດ.

2. ວຽກສືບຕໍ່

- ມອບໃຫ້ຄະນະຮັບຜິດຊອບກອງປະຊຸມປັບປຸງຄືນ(ຮ່າງ)ຂໍ້ຕົກລົງແຜນແບ່ງປັນສັບຊ້ອນນັກຮຽນ-ນັກສຶກສາ ແລະ ພະນັກງານລັດຖະກອນເຂົ້າຮຽນພາຍໃນປະເທດ, (ຮ່າງ)ແຈ້ງການວ່າດ້ວຍການຈັດຕັ້ງປະຕິບັດແຜນແບ່ງປັນສັບຊ້ອນນັກຮຽນ-ພະນັກງານ ຕາມຄຳເຫັນຂອງທີ່ປະຊຸມ, ຫຼັງຈາກນັ້ນນຳເອກະສານດັ່ງກ່າວເຂົ້າກອງປະຊຸມຄະນະລັດຖະມົນຕີ ເພື່ອຂໍອະນຸມັດ;
- ມອບໃຫ້ສະຖາບັນການສຶກສາຕ່າງໆ ລົງແນະແນວວິຊາຊີບ ໃຫ້ແກ່ນັກຮຽນ-ຜູ້ປົກຄອງໃນລະດັບໂຮງຮຽນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ ໃຫ້ຮັບຮູ້, ເຂົ້າໃຈຄວາມໝາຍ ແລະ ຄຸນຄ່າຂອງສາຂາວິຊາຕ່າງໆ; ພ້ອມທັງສົ່ງເສີມສາຂາວິຊາ ທີ່ຕອບສະໜອງຕາມແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ ແລະ ຂອງຊາດ ໃນແຕ່ລະໄລຍະ;
- ສະເໜີໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງສົ່ງແຜນພັດທະນາບຸກຄະລະກອນ ໂດຍສອດຄ່ອງກັບແຜນພັດທະນາຊັບພະຍາກອນມະນຸດຂອງແຂວງສົ່ງໃຫ້ກົມແຜນການເພື່ອຄົ້ນຄ້ວາສັງລວມເຂົ້າແຜນແບ່ງປັນສັບຊ້ອນແລ້ວ ນຳສະເໜີຄະນະນຳກະຊວງສຶກສາທິການ ແລະ ກິລາ ເພື່ອອະນຸມັດ;
- ສະເໜີໃຫ້ບັນດາກະຊວງຕ່າງໆທີ່ມີສະຖາບັນສຶກສາຂຶ້ນກັບສົ່ງແຜນຮັບນັກຮຽນ-ພະນັກງານ ເຂົ້າຮຽນປະຈຳສົກຮຽນ 2023-2024 ໃຫ້ກົມການສຶກສາຊັ້ນສູງ ເພື່ອສັງລວມ ແລະ ກວດສອບຫຼັກສູດທີ່ໄດ້ຮັບອະນຸມັດແລ້ວຮັບຮອງແຜນດັ່ງກ່າວ ແລະ ນຳສົ່ງໃຫ້ກົມແຜນການສັງລວມ ເຂົ້າແຜນແບ່ງປັນສັບຊ້ອນ;
- ສະເໜີໃຫ້ກົມການສຶກສາຊັ້ນສູງ, ກົມສ້າງຄູ, ກົມອາຊີວະສຶກສາ ແລະ ບັນດາກະຊວງຕ່າງໆທີ່ມີສະຖາບັນສຶກສາ ຂຶ້ນກັບລາຍງານຄືນຕົວເລກແຜນຮັບໃນສົກຮຽນ 2023-2024 ໃຫ້ແກ່ຄະນະນຳຂອງຕົນ ເພື່ອຮັບຮອງ ແລະ ຢັ້ງຢືນຕົວເລກ ແລ້ວສັງລວມຕົວເລກດັ່ງກ່າວສົ່ງໃຫ້ ກົມແຜນການ ໃນທ້າຍເດືອນ ມິຖຸນາ 2023.

3. ຄຳເຫັນອື່ນໆ

- ຫ້າມສະຖາບັນການສຶກສາທຸກແຫ່ງ ປ່ຽນສາຂາວິຊາຮຽນ ໃຫ້ແກ່ນັກຮຽນ-ພະນັກງານ ທີ່ໄດ້ຮັບນະໂຍບາຍແບ່ງປັນສັບຊ້ອນ (ໃນແຜນ) ເດັດຂາດ;
- ສະເໜີໃຫ້ມີການສົ່ງເສີມນັກຮຽນເກັ່ງ ມາຮຽນສາຍສ້າງຄູ ໂດຍໃຫ້ກົມວິຊາການ ເຮັດການຄົ້ນຄວ້າ ແລະ ປຶກສາຫາລື ເຖິງວິທີການ ແລະ ກົນໄກ ໃນການຈັດຕັ້ງປະຕິບັດທີ່ເໝາະສົມເພື່ອສະເໜີໃຫ້ຄະນະນຳພິຈາລະນາ;
- ເພື່ອສົ່ງເສີມສາຂາວິທະຍາສາດທຳມະຊາດ ແລະ ສ້າງຄວາມດຶງດູດໃຈໃຫ້ນັກຮຽນມີຄວາມສົນໃຈ ແລະ ຢາກຮຽນສາຍວິຊາດັ່ງກ່າວໃຫ້ຫຼາຍຂຶ້ນ ຕ້ອງໄດ້ລົງທຶນໃສ່ການຍົກສູງຄຸນນະພາບ ແລະ ອຸປະກອນຮັບໃຊ້ໃນການຮຽນ-ການສອນ ແລະ ການວິໄຈໃຫ້ທັນສະໄໝ. ພ້ອມທັງສົ່ງເສີມໃຫ້ພາກທຸລະກິດ ແລະ ຜູ້ປະກອບການ ບັນຈຸນັກສຶກສາ ທີ່ຮຽນຈົບສາຂາວິທະຍາສາດ;
- ເພື່ອເຮັດໃຫ້ນັກຮຽນ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບສາຂາວິຊາຮຽນ ແລະ ອາຊີບຕ່າງໆ ຄວນມີການກຳນົດເງື່ອນໄຂ ຫຼື ສ້າງກົນໄກ ໃຫ້ນັກຮຽນປີສຸດທ້າຍຂອງ ມັດທະຍົມຕອນຕົ້ນ ແລະ ປີສຸດທ້າຍຂອງມັດທະຍົມຕອນປາຍ ໄດ້ມີໂອກາດລົງໄປທັດສະນະສຶກສາຢູ່ສະຖານປະກອບການຕາມສາຂາວິຊາທີ່ຕົນເອງມັກ;

- ສ້າງສາຂາວິຊາທີ່ສອດຄ່ອງກັບທ່າອ່ຽງການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂອງທ້ອງຖິ່ນ; ໂດຍໃຫ້ທຸກໆພາກສ່ວນ ມີແຜນກຳນົດຕຳແໜ່ງງານຂອງຕົນ ແລະ ມີຖານຂໍ້ມູນທີ່ຊັດເຈນກ່ຽວກັບ ແຜນຄວາມຕ້ອງການຕະຫຼາດແຮງງານຂອງແຕ່ລະຂະແໜງການທັງພາກລັດ ແລະ ເອກະຊົນ;
- ໃຫ້ກະຊວງສຶກສາທິການ ແລະ ກິລາ ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າ ຂັ້ນສູນກາງ ແລະ ທ້ອງຖິ່ນ ສັງລວມແຜນຄວາມຕ້ອງການກໍ່ສ້າງຊັບພະຍາກອນມະນຸດ ເພື່ອເປັນບ່ອນອີງໃນການກໍ່ສ້າງໃຫ້ສອດຄ່ອງ;
- ສະເໜີໃຫ້ລັດຖະບານພິຈາລະນາໃຫ້ມີງົບປະມານສະເພາະໃນການພັດທະນາຊັບພະຍາກອນມະນຸດໃນຂົງເຂດທີ່ມີຄວາມຕ້ອງການ ໂດຍສະເພາະການສ້າງ ແລະ ພັດທະນາສາຂາວິຊາທີ່ຈຳເປັນ ຄວນມີການລົງທຶນໃສ່ທັງການສ້າງພາຍໃນ ແລະ ຕ່າງປະເທດ;
- ສະເໜີໃຫ້ມີການເກັບກຳສະຖິຕິນັກຮຽນ-ນັກສຶກສາທັງພາຍໃນ ແລະ ຕ່າງປະເທດ ຂອງຕົວເລກເຂົ້າຮຽນທຽບໃສ່ແຜນອະນຸມັດປະຈຳປີ ເພື່ອສາມາດເຫັນໄດ້ສະພາບລວມວ່າ ນັກຮຽນຈົບ ມ4 ແລະ ມ7 ໄປຮຽນ, ສຶກສາ ຢູ່ຕ່າງປະເທດ ເທົ່າໃດ ທຽບໃສ່ ການເຂົ້າຮຽນ, ສຶກສາ ຢູ່ພາຍໃນປະເທດ;
- ໃຫ້ມີເຄື່ອງມື, ກົນໄກ, ຕິດຕາມ, ກວດກາ, ການບັນຈຸສັບຊ້ອນຕົວຈິງ, ການມີວຽກເຮັດງານທຳໃນໄລຍະຜ່ານມາ ແລະ ໃນຕໍ່ໜ້າຢ່າງເປັນປົກກະຕິ ເພື່ອໃຫ້ມີຂໍ້ມູນສົມທຽບໃສ່ການລົງທຶນ, ການໃຊ້ຈ່າຍງົບປະມານຂອງລັດຖະບານ ຕໍ່ການກໍ່ສ້າງຊັບພະຍາກອນມະນຸດ;
- ໃຫ້ສະຖາບັນການສຶກສາຕິດຕາມຜູ້ຮຽນ ເພື່ອໃຫ້ຮູ້ວ່ານັກຮຽນຈົບແລ້ວມີວຽກເຮັດງານທຳຄືແນວໃດ ແລະ ເຮັດບົດວິໄຈນ້ອຍ ກ່ຽວກັບຄວາມຕ້ອງການຮຽນໃນສາຂາອາຊີບປະຈຸບັນ ເພື່ອດັດສົມແຜນຮັບ ແລະ ການກໍ່ສ້າງໃຫ້ສອດຄ່ອງ;
- ໃຫ້ກະຊວງສຶກສາທິການ ແລະ ກິລາຄົ້ນຄ້ວາສ້າງຫຼັກສູດ ແລະ ຝຶກອົບຮົມສ້າງຂີດຄວາມສາມາດໃນການວາງແຜນພັດທະນາຊັບພະຍາກອນມະນຸດ ເພື່ອວາງແຜນກໍ່ສ້າງໃຫ້ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຄວາມຕ້ອງການ;
- ສະເໜີໃຫ້ມີການຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ໂດຍການແບ່ງປັນສັບຊ້ອນຕົວເລກເຂົ້າຮຽນໃນລະດັບປະລິນຍາໂທ.

**ຜູ້ບັນທຶກ**
**ຫ້ອງການພັດທະນາຊັບພະຍາກອນມະນຸດ**

**ເຫັນ ແລະ ຮັບຮູ້**
**ຫົວໜ້າກົມ**

ທ. ວຽງທອງ ສີລັດຕະນະວົງ